ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 0899 /ກງ

ນະຄອນຫຼວງວຽງຈັນ, ວັນທີ 29 ມີນາ 2022

# ຄໍາແນະນໍາ

## ວ່າດ້ວຍ ການຄຸ້ມຄອງ ແລະ ນໍາໃຊ້ ບັດກວດກາຄັງເງິນ

- ອີງຕາມ ດໍາລັດ ວ່າດ້ວຍຄັງເງິນແຫ່ງຊາດ ສະບັບເລກທີ 259/ນຍ, ລົງວັນທີ 01 ມິຖຸນາ 2010;
- ອີງຕາມ ດໍາລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງການເງິນ ສະບັບເລກທີ 600/ນຍ, ລົງວັນທີ 14 ຕຸລາ 2021;
- ອີງຕາມ ໜັງສືສະເໜີຂອງກົມຈັດຕັ້ງ ແລະ ພະນັກງານ ສະບັບເລກທີ 0442/ກຈພ, ລົງວັນທີ 21 ມີນາ 2022.

## ລັດຖະມົນຕີ ອອກຄໍາແນະນໍາ:

**ມາດຕາ 1 ຈຸດປະສົງ**

ຄໍາແນະນໍາສະບັບນີ້ ກໍານົດຫຼັກການ, ລະບຽບການ, ຄວາມຮັບຜິດຊອບ ກ່ຽວກັບ ການຄຸ້ມຄອງ ແລະ ນໍາໃຊ້ບັດກວດກາຄັງເງິນ ເພື່ອກວດກາ ສິດ, ໜ້າທີ່, ຄວາມຮັບຜິດຊອບ ໃນການຄຸ້ມຄອງວຽກງານຄັງເງິນ ໃຫ້ມີປະສິດທິພາບ ແລະ ສາມາດກວດກາແບບ ສຸກເສີນ ຫຼື ຮີບດ່ວນ ເພື່ອຊຸກຍູ້ ແລະ ສ້າງຄວາມເຂັ້ມແຂງ ຕໍ່ວຽກງານກວດກາ, ຊອກໃຫ້ເຫັນ ດ້ານດີ, ດ້ານຕັ້ງໜ້າ, ດ້ານອ່ອນ, ດ້ານຫຍໍ້ທໍ້, ການລະເມີດ ກົດໝາຍ ແລະ ນິຕິກໍາໃຕ້ກົດໝາຍ ຂອງພະນັກງານ- ລັດຖະກອນຂະແໜງຄັງເງິນ ແນໃສ່ເຮັດໃຫ້ການຄຸ້ມຄອງວຽກງານຄັງເງິນລວມສູນຕາມສາຍຕັ້ງ ໃຫ້ມີຄວາມເຂັ້ມແຂງ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ.

**ມາດຕາ 2 ຂອບເຂດການນໍາໃຊ້**

ນໍາໃຊ້ສະເພາະພະນັກງານ-ລັດຖະກອນ ທີ່ຖືກມອບໝາຍເຮັດໜ້າທີ່ຄະນະກວດກາພາຍໃນຄັງເງິນແຫ່ງຊາດທີ່ໄດ້ຮັບມອບໝາຍຈາກການຈັດຕັ້ງ ນໍາໃຊ້ກວດກາແບບສຸກເສີນ ຫຼື ຮີບດ່ວນ ໃນການກວດກາການປະຕິບັດກົດໝາຍ, ນິຕິກໍາໃຕ້ກົດໝາຍ ແລະ ຄວາມຮັບຜິດຊອບໃນການປະຕິບັດໜ້າທີ່ ວຽກງານວິຊາສະເພາະ ຂອງພະນັກງານ-ລັດຖະກອນ ຂະແໜງຄັງເງິນ ໃນຂອບເຂດທົ່ວປະເທດ.

**ມາດຕາ 3 ຫຼັກການພື້ນຖານ**

ການນໍາໃຊ້ບັດກວດກາຄັງເງິນ ຕ້ອງປະຕິບັດຕາມຫຼັກການພື້ນຖານດັ່ງນີ້:

1. ການກວດກາຕ້ອງປະຕິບັດຕາມກົດໝາຍ ແລະ ນິຕິກໍາໃຕ້ກົດໝາຍ ທີ່ໄດ້ກໍານົດ, ປະຕິບັດຖືກຕ້ອງຕາມພາລະບົດບາດ, ໜ້າທີ່, ຂອບເຂດສິດໃນການປະຕິບັດວຽກງານວິຊາສະເພາະຂອງພະນັກງານ-ລັດຖະກອນ ຂະແໜງຄັງເງິນ;
2. ດໍາເນີນການກວດກາດ້ວຍຄວາມໂປ່ງໃສ, ຮັກສາຄວາມລັບ ແລະ ມີຈັນຍາບັນ; ການຕີລາຄາຄວາມໝາຍຂອງແຕ່ລະບັນຫາຕ້ອງມີຄວາມ ຍຸຕິທໍາ, ຮອບຄອບ ແລະ ຖືກຕ້ອງຕາມຫຼັກວິຊາການ;
3. ຮັບປະກັນລັກສະນະພາວະວິໄສ, ຊັດເຈນ, ທັນເວລາ ເປີດເຜີຍ ຕາມລະບຽບການ ແລະ ບໍ່ສ້າງຄວາມຫຍຸ້ງຍາກຕໍ່ກັບການເຄື່ອນໄຫວວຽກງານປົກກະຕິຂອງເປົ້າໝາຍທີ່ຖືກກວດກາ.



Scanned with CamScanner

**ມາດຕາ 4 ບັດກວດກາຄັງເງິນ**

ບັດກວດກາຄັງເງິນ ແມ່ນເອກະສານທາງລັດຖະການ ນຳໃຊ້ແທນຂໍ້ຕົກລົງ ຂອງລັດຖະມົນຕີກະຊວງການເງິນ ເພື່ອກວດກາແບບສຸກເສີນ ຫຼື ຮີບດ່ວນ ຕໍ່ເປົ້າໝາຍຖືກກວດກາ ພາຍໃນຂະແໜງຄັງເງິນ ໃນຂອບເຂດທົ່ວປະເທດ ໂດຍບໍ່ຕ້ອງແຈ້ງໃຫ້ເປົ້າໝາຍດັ່ງກ່າວຊາບລ່ວງໜ້າ.

**ມາດຕາ 5 ການ ຄຸ້ມຄອງ ແລະ ນຳໃຊ້**

1. ລັດຖະມົນຕີກະຊວງການເງິນ ອະນຸຍາດ ໃຫ້ພະນັກງານ-ລັດຖະກອນ ຄັງເງິນແຫ່ງຊາດ ຄຸ້ມຄອງ ແລະ ນຳໃຊ້ບັດກວດກາຄັງເງິນ ເພື່ອເຄື່ອນໄຫວວຽກງານກວດກາພາຍໃນຂະແໜງຄັງເງິນ ຕາມທີ່ໄດ້ກຳນົດໄວ້ໃນພາລະບົດບາດຂອງຕົນ;
2. ຄັງເງິນແຫ່ງຊາດ ເປັນຜູ້ຄຸ້ມຄອງເກັບຮັກສາ ແລະ ນຳໃຊ້ ບັດກວດກາຄັງເງິນ ເຂົ້າໃນການກວດກາຕໍ່ບັນດາເປົ້າໝາຍທີ່ຖືກກວດກາແບບ ສຸກເສີນ ຫຼື ຮີບດ່ວນ;
3. ການນຳໃຊ້ບັດກວດກາຄັງເງິນ ສາມາດເຄື່ອນໄຫວກວດກາ ເປົ້າໝາຍໃນແຕ່ລະຄັ້ງ ໂດຍບໍ່ຕ້ອງແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາ ຊາບລ່ວງໜ້າ;
4. ຄະນະກວດກາພາຍໃນຄັງເງິນແຫ່ງຊາດ ທີ່ໄດ້ຮັບການມອບໝາຍ ຕ້ອງແຈ້ງບັດກວດກາຄັງເງິນ ແລະ ຂໍ້ຕົກລົງຫົວໜ້າຄັງເງິນແຫ່ງຊາດ ເພື່ອແຈ້ງຈຸດປະສົງຕໍ່ເປົ້າໝາຍທີ່ຖືກກວດກາໃນແຕ່ລະຄັ້ງ;
5. ເກັບຮັກສາບັດກວດກາຄັງເງິນໃຫ້ມີຄວາມປອດໄພ, ບໍ່ໃຫ້ມີຮອຍຂີດ-ຂ້າ, ເປິເປື້ອນ ກໍລະນີຕົກເຮ່ຍເສຍຫາຍ ຕ້ອງແຈ້ງໃຫ້ການຈັດຕັ້ງຮັບຊາບ ເພື່ອສະເໜີລຶບລ້າງ ແລະ ອອກບັດໃໝ່;
6. ພະນັກງານ-ລັດຖະກອນ ຄັງເງິນແຫ່ງຊາດ ທີ່ຖືກມອບໝາຍຈາກການຈັດຕັ້ງ ພາຍຫຼັງສຳເລັດການກວດກາຕໍ່ເປົ້າໝາຍແຕ່ລະຄັ້ງ ຕ້ອງນຳສົ່ງບັດກວດກາຄັງເງິນ ໃຫ້ຫົວໜ້າຄັງເງິນແຫ່ງຊາດ ຫຼື ຜູ້ທີ່ຖືກມອບສິດ ເກັບຮັກສາ.

**ມາດຕາ 6 ເນື້ອໃນ ແລະ ອາຍຸການນຳໃຊ້ ບັດກວດກາຄັງເງິນ**

**6.1 ເນື້ອໃນ**

ບັດກວດກາຄັງເງິນ ມີຂະໜາດ 12 cm x 9 cm, ດ້ານໜ້າ ແລະ ດ້ານຫຼັງ ບັດພື້ນສີຂາວ ຕົວໜັງສື ແລະ ຂອບສີຟ້າເຂັ້ມ ມີລາຍນ້ຳ ຕົວອັກສອນຫຍໍ້ "ຄງຊ" ແລະ ປະກອບມີເນື້ອໃນທີ່ສຳຄັນ ດັ່ງນີ້ :

**ດ້ານໜ້າຂອງບັດ :**

- ເຄື່ອງໝາຍຊາດ;
- ຊື່ ປະເທດ ແລະ ຄຳຂວັນຂອງຊາດ;
- ຊື່ ອົງການຈັດຕັ້ງປະກາດໃຊ້ເອກະສານ;
- ເລກທີ ແລະ ຕົວອັກສອນຫຍໍ້ ຂອງການຈັດຕັ້ງທີ່ອອກບັດ;
- ວັນ, ເດືອນ, ປີ ການຈັດຕັ້ງທີ່ອອກບັດ;
- ຊື່ ບັດກວດກາຄັງເງິນ;
- ຕິດຮູບຂະໜາດ 4 x 6 ຂອງພະນັກງານຜູ້ຖືບັດ;
- ລະຫັດລັດຖະກອນ;
- ຊື່ ແລະ ນາມສະກຸນຜູ້ຖືບັດ;
- ຕຳແໜ່ງ;
- ບ່ອນສັງກັດ;
- ວັນ, ເດືອນ, ປີ ອອກບັດ;



Scanned with CamScanner

- ວັນ, ເດືອນ, ປີ ໝົດອາຍຸ;
- ຕໍາແໜ່ງອົງການຈັດຕັ້ງອອກບັດ.

ດ້ານຫຼັງຂອງບັດ:

- ກໍານົດ ຄໍາແນະນໍາ ໃນການຄຸ້ມຄອງ ແລະ ນໍາໃຊ້ບັດ.

6.2 ອາຍຸການນໍາໃຊ້ບັດ

ບັດກວດກາຄັງເງິນ ນໍາໃຊ້ໄດ້ 1 ປີ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ, ພາຍຫຼັງໝົດອາຍຸການນໍາໃຊ້ ຕ້ອງຂໍອະນຸຍາດອອກບັດໃໝ່ຈາກກະຊວງການເງິນຕາມລະບຽບການ.

## ມາດຕາ 7 ຄວາມຮັບຜິດຊອບ

### 7.1 ຄັງເງິນແຫ່ງຊາດ

1. ຄຸ້ມຄອງ ແລະ ນໍາໃຊ້ ບັດກວດກາຄັງເງິນ ເພື່ອຈັດຕັ້ງປະຕິບັດການກວດກາ ບົນພື້ນຖານ ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບ ຕາມພາລະບົດບາດ;
2. ເປັນເຈົ້າການເຜີຍແຜ່, ແນະນໍາ ກ່ຽວກັບ ຄໍາແນະນໍາສະບັບນີ້ ໃຫ້ພະນັກງານ-ລັດຖະກອນ ຂະແໜງຄັງເງິນ ແລະ ພາກສ່ວນກ່ຽວຂ້ອງ ຮັບຮູ້, ເຂົ້າໃຈ, ເຊື່ອມຊຶມ ແລະໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດຢ່າງເຂັ້ມງວດ;
3. ຊຸກຍູ້, ແນະນໍາ, ຕິດຕາມ, ກວດກາ ແລະ ປະເມີນຜົນ ການຄຸ້ມຄອງ ແລະ ນໍາໃຊ້ ບັດດັ່ງກ່າວ ເປັນແຕ່ລະໄລຍະ; ກໍລະນີພົບຄວາມຫຍຸ້ງຍາກ ໃນການຈັດຕັ້ງປະຕິບັດ ຕ້ອງຮີບຮ້ອນນໍາສະເໜີວິທີການແກ້ໄຂ ໃຫ້ຖືກຕ້ອງກັບສະພາບເງື່ອນໄຂຕົວຈິງ;
4. ຮີບຮ້ອນ ແຕ່ງຕັ້ງຄະນະກວດກາພາຍໃນຄັງເງິນແຫ່ງຊາດ ເພື່ອລົງກວດກາຕໍ່ເປົ້າໝາຍແບບ ສຸກເສີນ ຫຼື ຮີບດ່ວນ ທີ່ມີປະກົດການລະເມີດ ກົດໝາຍ ແລະ ນິຕິກໍາໃຕ້ກົດໝາຍ;
5. ສະຫຼຸບ, ລາຍງານຜົນການກວດກາ ໃຫ້ຄະນະນໍາກະຊວງການເງິນ ເປັນແຕ່ລະຄັ້ງ.

### 7.2 ຄັງເງິນປະຈໍາ ນະຄອນຫຼວງ, ບັນດາແຂວງ, ເມືອງ, ເທດສະບານ ແລະ ນະຄອນ

1. ເປັນເຈົ້າການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອໃຫ້ຄວາມຮ່ວມມື, ອໍານວຍຄວາມສະດວກ ແລະ ສະໜອງ ຂໍ້ມູນ ໃຫ້ຄະນະກວດກາຂອງຄັງເງິນແຫ່ງຊາດ;
2. ເອົາໃຈໃສ່ ແກ້ໄຂບັນຫາທີ່ເປັນຂໍ້ຄົງຄ້າງ ຫຼື ປະກົດການຫຍໍ້ທໍ້ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໂດຍປະສານສົມທົບກັບອົງການປົກຄອງທ້ອງຖິ່ນ;
3. ສະຫຼຸບ, ລາຍງານ ການແກ້ໄຂຜົນການກວດກາ ໃຫ້ຫົວໜ້າຄັງເງິນແຫ່ງຊາດ ແລະ ພະແນກການເງິນ ແຂວງ, ນະຄອນຫຼວງ ເປັນແຕ່ລະໄລຍະ.

### 7.3 ອົງການປົກຄອງທ້ອງຖິ່ນ

1. ຊຸກຍູ້, ຕິດຕາມ, ແນະນໍາ ຂະແໜງຄັງເງິນ ໃນການຈັດຕັ້ງປະຕິບັດວຽກງານຄັງເງິນ ໃຫ້ຖືກຕ້ອງຕາມ ກົດໝາຍ ແລະ ນິຕິກໍາໃຕ້ກົດໝາຍ;
2. ອໍານວຍຄວາມສະດວກ ແລະ ໃຫ້ຄວາມຮ່ວມມື ໃນການເຄື່ອນໄຫວວຽກງານກວດກາ ຂອງຄະນະກວດກາພາຍໃນຄັງເງິນແຫ່ງຊາດ;
3. ຊຸກຍູ້, ແນະນໍາ, ຕິດຕາມ ແລະ ມີສ່ວນຮ່ວມໃນການແກ້ໄຂບັນຫາ ທີ່ເປັນຂໍ້ຄົງຄ້າງ ຫຼື ປະກົດການຫຍໍ້ທໍ້ທີ່ເກີດຂຶ້ນຢູ່ຄັງເງິນປະຈໍາທ້ອງຖິ່ນຕົນ;
4. ລາຍງານ ການແກ້ໄຂຜົນການກວດກາ ໃຫ້ຂະແໜງການກ່ຽວຂ້ອງເປັນແຕ່ລະໄລຍະ.



Scanned with CamScanner

ມາດຕາ 8 ການເກັບກໍາຂໍ້ມູນ, ສະຫຼຸບ, ສັງລວມ ແລະ ລາຍງານ

1. ເກັບກໍາ ຂໍ້ມູນ, ເອກະສານຢັ້ງຢືນ, ຫຼັກຖານ ແລະ ສັງລວມ ບັນດາບັນຫາຕ່າງໆ ຈາກການກວດກາຂໍ້ມູນຕົວຈິງ ເພື່ອເປັນບ່ອນອີງ ໃນການສະຫຼຸບລາຍງານຜົນຂອງການກວດກາແຕ່ລະຄັ້ງ;
2. ໄຈ້ແຍກ, ຕີລາຄາ ບັນຫາໃຫ້ລະອຽດ, ຈະແຈ້ງ ຍົກໃຫ້ເຫັນດ້ານດີ, ດ້ານອ່ອນ ແລະ ຂໍ້ຄົງຄ້າງຕ່າງໆ ຂອງເປົ້າໝາຍທີ່ຖືກກວດກາ ແລະ ສະເໜີມາດຕະການ, ວິທີແກ້ໄຂໃຫ້ຖືກຕ້ອງຕາມ ກົດໝາຍ ແລະ ນິຕິກໍາໃຕ້ກົດໝາຍ;
3. ບົດບັນທຶກ ຜົນການກວດກາແຕ່ລະຄັ້ງ ຕ້ອງໄດ້ຜ່ານການເຫັນດີເປັນເອກະພາບ ຮ່ວມກັບການຈັດຕັ້ງທີ່ກ່ຽວຂ້ອງ ເພື່ອຮັບຮູ້ ແລະ ຢັ້ງຢືນ ຕໍ່ຜົນການກວດກາ;
4. ຄະນະກວດກາພາຍໃນຄັງເງິນແຫ່ງຊາດ ຕ້ອງໄດ້ລາຍງານຜົນການກວດກາ ໃຫ້ຫົວໜ້າຄັງເງິນແຫ່ງຊາດ ແລະ ຄະນະນໍາກະຊວງການເງິນ ຮັບຊາບ ພາຍຫຼັງສໍາເລັດການກວດກາແຕ່ລະຄັ້ງ.

ມາດຕາ 9 ຂໍ້ຫ້າມ

9.1 ຄະນະກວດກາພາຍໃນຄັງເງິນແຫ່ງຊາດ

1. ຫ້າມນໍາໃຊ້ບັດກວດກາຄັງເງິນ ເຂົ້າໃນການເຄື່ອນໄຫວກວດກາ ທີ່ບໍ່ຖືກກັບເປົ້າໝາຍ;
2. ຫ້າມປອມແປງບັດກວດກາຄັງເງິນ, ໃຫ້ຜູ້ອື່ນຢືມບັດກວດກາຄັງເງິນ ຫຼື ນໍາໃຊ້ໂດຍທີ່ບໍ່ໄດ້ຮັບອະນຸຍາດ;
3. ຫ້າມສວຍໃຊ້ໜ້າທີ່, ຕໍາແໜ່ງ, ອໍານາດ ເພື່ອຫາຜົນປະໂຫຍດສ່ວນຕົວ, ຄອບຄົວ ຫຼື ຍາດພີ່ນ້ອງ;
4. ຫ້າມປອມແປງ, ທໍາລາຍ, ເພີ່ມເຕີມ, ເປີດເຜີຍຄວາມລັບດ້ານຂໍ້ມູນຫຼັກຖານການກວດກາ ຫຼື ຂໍ້ມູນອື່ນ ທີ່ກ່ຽວຂ້ອງກັບຜົນຂອງການກວດກາ;
5. ຫ້າມກ່າວຫາ, ນາບຂູ່ ຫຼື ສ້າງຄວາມຫຍຸ້ງຍາກ ໃຫ້ແກ່ເປົ້າໝາຍທີ່ຖືກກວດກາ;
6. ຫ້າມມີພຶດຕິກໍາອື່ນ ທີ່ລະເມີດ ກົດໝາຍ ແລະ ລະບຽບການທີ່ໄດ້ກໍານົດ.

9.2 ເປົ້າໝາຍຖືກກວດກາ

1. ຫ້າມປະຕິເສດການ ໃຫ້ຄວາມຮ່ວມມື, ສະໜອງຂໍ້ມູນ, ເອກະສານ ແລະ ອື່ນ ທີ່ພົວພັນກັບການກວດກາ;
2. ຫ້າມລາຍງານ, ສະໜອງ ຂໍ້ມູນ, ເອກະສານ ທີ່ບໍ່ຖືກກັບຄວາມເປັນຈິງ, ຊຸກເຊື່ອງ, ປົດບັງ, ທໍາລາຍ ເອກະສານ ຫຼື ວັດຖຸສິ່ງຂອງ, ກົດໜ່ວງຖ່ວງດຶງ ແລະ ແກ່ຍາວເວລາ ທີ່ພົວພັນກັບການກວດກາ;
3. ຫ້າມໃຊ້ຄວາມຮຸນແຮງ, ຂັດຂວາງ, ບັງຄັບ, ນາບຂູ່ ຄະນະກວດກາພາຍໃນຄັງເງິນແຫ່ງຊາດ ຫຼື ຜູ້ສະໜອງຂໍ້ມູນໃຫ້ແກ່ການກວດກາ; ສ້າງທັດສະນະຕອບຕ້ານ ຫຼື ອັກຄະຕິ ຕໍ່ຜູ້ນໍາໃຊ້ບັດກວດກາຄັງເງິນ;
4. ຫ້າມຊື້ຈ້າງ, ໃຫ້ສິນບົນ ຄະນະກວດກາພາຍໃນຄັງເງິນແຫ່ງຊາດ, ຜູ້ສະໜອງຂໍ້ມູນ ຫຼື ບຸກຄົນອື່ນ ທີ່ພົວພັນກັບການກວດກາ;
5. ຫ້າມມີພຶດຕິກໍາອື່ນ ທີ່ລະເມີດ ກົດໝາຍ ແລະ ນິຕິກໍາໃຕ້ກົດໝາຍ.

9.3 ການຈັດຕັ້ງ ແລະ ບຸກຄົນ

1. ຫ້າມແຊກແຊງ, ກ້າວກ່າຍ ແລະ ຂັດຂວາງ ໃນເວລາດໍາເນີນການກວດກາ;
2. ຫ້າມໃຊ້ຄວາມຮຸນແຮງ, ນາບຂູ່, ທໍາຮ້າຍ ຄະນະກວດກາພາຍໃນຄັງເງິນແຫ່ງຊາດ ແລະ ຜູ້ສະໜອງຂໍ້ມູນທີ່ພົວພັນກັບການກວດກາ ຫຼື ປົກປ້ອງເປົ້າໝາຍທີ່ຖືກກວດກາ;
3. ຫ້າມປົກປິດ, ເຊື່ອງອໍາ ຫຼື ທໍາລາຍຂໍ້ມູນ ຫຼັກຖານທີ່ພົວພັນກັບວຽກງານກວດກາ;
4. ຫ້າມມີພຶດຕິກໍາອື່ນ ທີ່ລະເມີດ ກົດໝາຍ ແລະ ນິຕິກໍາໃຕ້ກົດໝາຍ.



Scanned with CamScanner

**ມາດຕາ 10 ການຈັດຕັ້ງປະຕິບັດ**

1. ມອບໃຫ້ ຄັງເງິນແຫ່ງຊາດ, ຄັງເງິນປະຈໍາ ແຂວງ, ນະຄອນຫຼວງ, ຄັງເງິນປະຈໍາ ເມືອງ, ນະຄອນ ແລະ ໜ່ວຍງານຄັງເງິນປະຈໍາເມືອງ ເຜີຍແຜ່, ແນະນໍາ ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດ ຄໍາແນະນໍາສະບັບນີ້ຢ່າງເຂັ້ມງວດ;
2. ບັນດາກະຊວງ, ອົງການທຽບເທົ່າ, ບັນດາແຂວງ, ນະຄອນຫຼວງ, ບັນດາກົມອ້ອມຂ້າງກະຊວງການເງິນ, ພະແນກການເງິນ ແຂວງ, ນະຄອນຫຼວງ; ຫ້ອງການ-ການເງິນ ເມືອງ, ນະຄອນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ຄວາມຮ່ວມມື ໃນການຈັດຕັ້ງປະຕິບັດ ຄໍາແນະນໍາສະບັບນີ້;
3. ຜ່ານການຈັດຕັ້ງປະຕິບັດ ກໍລະນີພົບຄວາມຫຍຸ້ງຍາກໃນການນໍາໃຊ້ບັດກວດກາຄັງເງິນ ໃຫ້ຮີບຮ້ອນຄົ້ນຄ້ວາ ປັບປຸງ ແລະ ລາຍງານກະຊວງການເງິນຮັບຊາບ.

**ມາດຕາ 11 ຜົນສັກສິດ**

ຄໍາແນະນໍາສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**

ບຸນໂຈມ ອຸບົນປະເສີດ



Scanned with CamScanner